# ເຕືອນໃຈພີ່ນ້ອງລາວ

ຈາກ: ໜູ ນິຣາວັນ

ອັນວ່າ ສັງຂາລຄົນລ່ວງເຄື້ອນ ເລື່ອນຜ່ານນານຫຼາຍປີ
ຜົມດຳດົກເຄີຍເປັນຊົງ ກໍປ່ຽນສີຂາວລ້ານ
ສັງຂາລຄົນເຮົາໝຸນຍ້າຍ ໝຸນໄປບໍ່ຫວນຈອດ
ຮອດວົງຈອນເຂດເຂົ້າ ກໍໝຸນເລື້ອຍອາຍຸຂັຍ ຈິງແລ້ວ

ຄືດັ່ງ ຮູບຊົງຂອງເຮົານັ້ນ ກໍຫັນປ່ຽນໄປຕາມ
ປຽບປານມາລາຫອມ ກີບຈົ່ຈູມຊຸມໄວ້
ກໍເລີຍບານໄຂອ້າ ດວງມາລາຫອມກິ່ນ
ກີບກ້ານລຸດຫລົ່ນຮ້ອຍ ກວາຍເປື້ອງປ່ຽນຣະດູ ແທ້ນາ

ຍ້ອນວ່າ ນັ້ນເປັນກົດຕັ້ງໄວ້ ທຳມະຊາດປຸນແປງ
ບໍ່ທ່ຽງຕົງບັນທັດ ປ່ຽນຕາມກາລບໍ່ພອຍມົ້ນ
ຊຸມໝູ່ຊົນຊາວເຊື້ອ ລາວເຮົາຢ່າແປປ່ຽນ
ວຽນຫາຈຸດຮັດແໜ້ນ ຫັນໜ້າຮ່ວມທາງ ກັນເນີ

ຂໍໃຫ້ ຄົນລາວທຸກທົ່ວດ້າວ ຈົ່ງຮັກຮ່ວມສາມັກຄີ ກັນດາຍ
ຢ່າໄດ້ມີຜິດຖຽງ ແຍ້ງຊິງເພມ້າງ
ຫາທາງຮວມກັນເຂົ້າ ເປັນສຽງດຽວເວົ້າມ່ວນ
ຊຸມໝູ່ເຍົາໜຸ່ມນ້ອຍ ເຂົາຊິຍ້ອງຍ່າງຕາມ ດອກນາ

ພ້ອມທັງ ຢ່າໄດ້ຄິດແບ່ງຊັ້ນ ຫຼືແຍກເຜົ່າພົງພັນ ກັນທ້ອນ
ຈະໃຕ້ເໜືອຫຼືກາງ ກໍແມ່ນລາວຄືດ້າມ
ຊົນເຜົ່າໃດກໍຄືລ້ວນ ຈະລາວເທິງສູງລຸ່ມ ກໍດີ

ຊຸມໝູ່ພົງຊາດເຊື້ອ ກໍລາວລ້ວນເຊັ່ນກັນ ແທ້ດາຍ

ອັນໜຶ່ງ ຂໍໃຫ້ພວກພີ່ນ້ອງ ບາກບັ່ນຂຍັນພຽນ
ມານະສອນເດັກລາວ ໃຫ້ຮູ້ຕົນວ່າລາວແທ້
ບັນພະຊົນແຕ່ກົກເຄົ້າ ຢ່າລືມໄລໃຫ້ຮູ້ຕໍ່
ພໍເຕີບໂຕໃຫຍ່ຂຶ້ນ ມູນເຊື້ອສືບຊົມີ

ຂໍໃຫ້ ພາກັນສອນສັ່ງຊີ້ ສືບທອດພາສາລາວ ເຮົາເນີ
ເພາະວ່າເປັນຈຸດໝາຍ ບອກຊາດລາວຍັງມີໃວ້
ສຸພາສິຕສອນຍັງໃຫ້ ວ່າພາສາບອກຊາຕ
ມາລະຍາດກໍບອກຊີ້ ຕະກຸນຊັ້ນສໍາ່ໃດ ຫັ້ນເດ

ບັດນີ້ ນິຣາວັນຂໍຮຽນເອີ້ນ ເຊີນເອົາສິ່ງສັກສິດ
ຊຶ່ງສະຖິດໃນໂລກາ ຈົ່ງໄດ້ມາປົກປ້ອງ
ປວງຊົນລາວທັງເຊື້ອ ຢ່າມີໂພຍພັຍພະຍາດ
ປາຖນາຄິດຢາກໄດ້ ໃຫ້ສົມແມ້ງດັ່ງປະສົງ ແທ້ແລ້ວ

ສ່ວນວ່າ ສິ່ງທີ່ເປັນເຄາະຮ້າຍ ເຄີຍບັງບຽດຈັ່ງໄຮ
ກໍໃຫ້ຈາງເລືອນຫາຍ ລ່ວງໄປໝົດສ້ຽງ
ພຽງແຕ່ເຫຼືອປະໃວ້ ແຕ່ຄວາມດີອັນມີໂຊກ
ທຸກໂສກເຄີຍພົບພໍ້ ໃຫ້ກາຍລໍ້າລ່ວງເລີຍ ແດ່ທ້ອນ

ອົງເທວາ ຂໍຈົ່ງໄດ້ຫອບຫິ້ວ ເອົາຄວາມຄຽດຊັງໜີ
ເທພໄທ້ ນໍາຫອບເອົາຄວາມດີ ຮັກຫອມມາພ້ອມ
ໃຫ້ຄອບຄົວລາວໄດ້ ປອງດອງອົບອຸ່ນ ກັນທ້ອນ
ສົມບູນຊັພສິ່ງລົ້ນ ເງິນທອງເຂົ້າກ່າຍກອງ ແທ້ເນີ

ອັນຫນຶ່ງ ໃຫ້ບັນລຸລ່ວງໄດ້ ລາພຍົດສັລເສີນ
เป็นທີ່ຄືນຍໍຍົກ ຊື່ສຽງດັ່ງກ້ອງ
ປົກປ້ອງມວນຊົນເຊື້ອ ຍາຕິວົງນ້ອງນຸ່ງ
ໃຫ້ຢູ່ດີພຽບພ້ອມ ສເມີດ້ານດັ່ງກັນ ແມ່ເນີ

ທ້າຍນີ້ ນິຣາວັນຂໍສິ່ງໃຫ້ ວອນເອົາສີ່ຈັຕຸພອນ
ປະກອບທັງອາຍຸ ໃຫ້ຢູ່ຍືນຍາວຫມັ້ນ
ວັນນະລືຊາກ້ອງ ສຸຂຂະນຳຄວາມສຸຂຍິ່ງ
ພະລະຫຼີງລໍາ່ສ້ຽງ ຊູຄໍ້າຕລອດປີ ແດ່ທ້ອນ